# ຄຸນຄ່າຂອງຂ່າວດີທີ່ໃຊ້ການໄດ້ຢ່າງແທ້ຈິງ ຕໍ່ຊຸມຊົນຂອງເຈົ້າ



ໃນໂລກທຸກມື້ນີ້ເຮົາມັກຈະໄດ້ຍິນຄວາມຄິດເຫັນທີ່ວ່າ "ຫລັກການຂອງສາສະຫນາຄລິດໃຊ້ການບໍ່ໄດ້. ເອົາຫລັກການແບບນີ້ມາໃຊ້ກັບສັງຄົມທີ່ສະຫລັບຊັບຊ້ອນໃນສະໄຫມນີ້ຈະບໍ່ໄດ້ຜົນ." ແນວໃດກໍຕາມ ລາຍງານການສົນທະນາລະຫວ່າງມະຫາຕະມະ ເຄ. ຄານທີ ຜູ້ນໍາຊາວອິນດູກັບຂຸນນາງເອີວິນ ອະດີດອຸປະຣາດຊາວອັງກິດທີ່ປະຈໍາຢູ່ປະເທດອິນເດຍ ໄດ້ສະແດງໃຫ້ເຫັນທັດສະນະທີ່ຕ່າງກັນຫລາຍ. ເຊິ່ງຂຸນນາງເອີວິນໄດ້ຖາມຄານທີເຖິງສິ່ງທີ່ທ່ານຄິດວ່າຈະແກ້ໄຂບັນຫາລະຫວ່າງອັງກິດກັບອິນເດຍໄດ້. ຄານທີຈັບເອົາຄໍາພີໄບເບິນຂຶ້ນມາແລ້ວເປີດໄປທີ່ມັດທາຍບົດຫ້າ ແລະກ່າວວ່າ "ເມື່ອໃດທີ່ປະເທດຂອງທ່ານແລະຂອງຂ້າພະເຈົ້າຕົກລົງຕາມຄໍາສອນທີ່ພະຄລິດບັນຍັດໄວ້ໃນຄໍາເທດເທິງພູເຂົາ ພວກເຮົາຈະແກ້ໄຂບັນຫາບໍ່ພຽງແຕ່ຂອງປະເທດເຮົາທັງສອງເທົ່ານັ້ນ ແຕ່ຈະແກ້ບັນຫາທັງຫມົດຂອງໂລກໄດ້."

ຄໍາເທດນັ້ນກ່າວເຖິງການສະແຫວງຫາສິ່ງຝ່າຍວິນຍານ ແລະການເປັນຄົນທີ່ມີຈິດໃຈອ່ອນໂຍນ, ມັກສັນຕິ, ມີຄວາມເມດຕາ, ເປັນຄົນຮັກຄວາມເປັນທໍາ. ແລະບໍ່ພຽງແຕ່ຕິຕຽນການຂ້າຄົນ ແຕ່ຍັງຕິຕຽນການເປັນຄົນຄຽດແຄ້ນຄົນອື່ນນໍາອີກ, ບໍ່ພຽງແຕ່ຕໍາຫນິການຫລິ້ນຊູ້ເທົ່ານັ້ນ ແຕ່ຍັງຕໍາຫນິການຫມົກມຸ້ນໃນເລື່ອງລາຄະຕັນຫາຊໍ້າ. ຄໍາເທດນັ້ນຕໍ່ຕ້ານການຢ່າຮ້າງທີ່ຂາດຄວາມຮັບຜິດຊອບເຊິ່ງເຮັດໃຫ້ຄອບຄົວແຕກແຍກແລະເຮັດໃຫ້ເກີດຜົນຮ້າຍຕໍ່ລູກ. ຄໍາເທດນັ້ນຍັງບອກວ່າ 'ໃຫ້ຮັກແມ່ນແຕ່ຜູ້ທີ່ບໍ່ມັກເຈົ້າ, ໃຫ້ທານແກ່ຄົນທີ່ທຸກຍາກ, ເຊົາພິພາກສາຄົນອື່ນແບບຂາດຄວາມເມດຕາ, ໃຫ້ປະຕິບັດກັບຜູ້ອື່ນແບບທີ່ເຈົ້າຢາກໃຫ້ເຂົາປະຕິບັດກັບເຈົ້າ.' ຖ້ານໍາໃຊ້ຫລັກການທັງຫມົດນີ້ກໍຈະເກີດຜົນປະໂຫຍດຢ່າງໃຫຍ່ຫລວງ. ຄົນໃນຊຸມຊົນຂອງເຈົ້າແຮ່ງນໍາໃຊ້ຫລັກການນັ້ນຫລາຍສໍ່າໃດ ຊຸມຊົນກໍແຮ່ງໄດ້ຜົນດີຫລາຍສໍ່ານັ້ນ!

ພະຍານພະເຢໂຫວາເປັນພະລັງຊຸກຍູໃຫ້ປະຕິບັດຕາມແນວຊີ້ນໍານີ້. ຄໍາພີໄບເບິນສອນເຂົາເຈົ້າໃຫ້ນັບຖືສາຍສົມລົດ. ເຂົາເຈົ້າອົບຮົມສັ່ງສອນລູກຕາມຫລັກການທີ່ຖືກຕ້ອງ. ມີການເນັ້ນເຖິງຄວາມສໍາຄັນຂອງຊີວິດຄອບຄົວ. ຄອບຄົວທີ່ເປັນເອກະພາບກໍ່ຜົນດີຕໍ່ຊຸມຊົນຂອງເຈົ້າ ແລະຍັງມີຜົນຕໍ່ປະເທດຊາດນໍາອີກ. ປະຫວັດສາດເຕັມໄປດ້ວຍຕົວຢ່າງຂອງມະຫາອໍານາດໂລກທີ່ຫລົ້ມສະຫລາຍຍ້ອນສາຍສໍາພັນໃນຄອບຄົວອ່ອນແອແລະການຜິດສິນລະທໍາເພີ່ມຂຶ້ນ. ຍິ່ງພະຍານພະເຢໂຫວາໂນ້ມນ້າວຜູ້ຄົນແລະຄອບຄົວໃຫ້ດໍາເນີນຊີວິດຕາມຫລັກການຄລິດສະຕຽນຫລາຍສໍ່າໃດ ການຜິດກົດຫມາຍ, ການຜິດສິນລະທໍາແລະອາດຊະຍາກໍາໃນຊຸມຊົນຂອງເຈົ້າກໍຍິ່ງຈະລົດຫນ້ອຍລົງສໍ່ານັ້ນ.

ບັນຫາໃຫຍ່ທີ່ສ້າງຄວາມເດືອດຮ້ອນໃຫ້ກັບຊຸມຊົນແລະຊາດຕ່າງໆຢ່າງໜຶ່ງແມ່ນເລື່ອງອະຄະຕິທາງດ້ານເຊື້ອຊາດ. ໃນທາງກົງກັນຂ້າມ ອັກຄະສາວົກເປໂຕກ່າວວ່າ "ເຮົາກໍເຂົ້າໃຈເປັນແທ້ວ່າພະເຈົ້າບໍ່ເລືອກໜ້າຄົນ ແຕ່ວ່າໃນທຸກປະເທດຜູ້ໜຶ່ງຜູ້ໃດທີ່ຢ້ານຢຳພະເຈົ້າແລະກະທຳການຊອບທຳກໍເປັນທີ່ຊອບໃຈແກ່ພະອົງ." ແລະໂປໂລຂຽນວ່າ "ຊາວຢູເດຫລືຊາວເຫເລນກໍບໍ່ມີ ຄົນທາດຫລືບໍ່ໃຊ່ທາດກໍບໍ່ມີ ຜູ້ຊາຍແລະຜູ້ຍິງກໍບໍ່ມີ ເຫດວ່າທ່ານທັງປວງເປັນອັນໜຶ່ງອັນດຽວໃນພະຄລິດເຢຊູ." (ກິດຈະການ 10:34, 35; ຄາລາຊີ 3:28) ພະຍານພະເຢໂຫວາຍອມຮັບໃນເລື່ອງນີ້. ຄົນຈາກທຸກເຊື້ອຊາດແລະທຸກສີຜິວດຳລົງຊີວິດແລະເຮັດວຽກຮ່ວມກັນທີ່ສຳນັກງານໃຫຍ່, ສຳນັກງານສາຂາ, ແລະໃນປະຊາຄົມຕ່າງໆຂອງເຂົາເຈົ້າໄດ້.

ຢູ່ແຖບອາຟະລິກາ ບາງຊົນເຜົ່າຖ້າຢູ່ນຳກັນກໍຈະເກີດການປະທະກັນ. ເຖິງຢ່າງນັ້ນກໍຕາມ ຢູ່ການປະຊຸມພາກຂອງພະຍານພະເຢໂຫວາໃນແຖບນີ້ ຜູ້ຄົນຈາກຫລາຍຊົນເຜົ່າໄດ້ກິນ, ນອນ, ແລະນະມັດສະການນຳກັນຢ່າງປອງດອງກັນພ້ອມກັບມີມິດຕະພາບອັນອົບອຸ່ນ. ເມື່ອເຈົ້າໜ້າທີ່ບ້ານເມືອງເຫັນແນວນັ້ນ ເຂົາເຈົ້າກໍ

*ທຸກຊົນຊາດແລະທຸກສີຜິວ ເຮັດວຽກນຳກັນ*



ແປກໃຈ. ໃນໜັງສືພິມ*ອຳສະເຕີດຳ ນິວສ໌* ແຫ່ງນິວຢອກ ສະບັບວັນທີ 2 ເດືອນສິງຫາ ປີ 1958 ກ່າວເຖິງຕົວຢ່າງກ່ຽວກັບຫລັກການຄລິດສະຕຽນແທ້ທີ່ກໍ່ໃຫ້ເກີດເອກະພາບ. ຄວາມຄິດເຫັນນີ້ເກີດຈາກການສັງເກດເບິ່ງການປະຊຸມນານາຊາດທີ່ໄດ້ກ່າວເຖິງກ່ອນໜ້ານີ້ ເຊິ່ງມີພະຍານພະເຢໂຫວາຫລາຍກວ່າສອງແສນຫ້າໝື່ນຄົນເຂົ້າຮ່ວມປະຊຸມນຳກັນໃນນະຄອນນິວຢອກ.

*ຫລັກການຄລິດສະຕຽນໃຊ້ການໄດ້ແທ້. ມີຫລັກການອື່ນອີກບໍທີ່ໃຊ້ໄດ້ຜົນ?*

"ມີຄົນຜິວດຳ, ຜິວຂາວແລະຜິວເຫລືອງມາຈາກທຸກສະຖານະພາບໃນສັງຄົມແລະຈາກທຸກພາກສ່ວນຂອງໂລກຢູ່ນຳກັນຢ່າງເບີກບານ ມ່ວນຊື່ນແລະເປັນກັນເອງ . . . ຜູ້ນະມັດສະການທີ່ເປັນພະຍານພະເຢໂຫວາຈາກ 120 ດິນແດນໄດ້ມາຢູ່ແລະນະມັດສະການຮ່ວມກັນຢ່າງສະຫງົບສຸກ ເຊິ່ງສະແດງໃຫ້ຄົນອາເມລິກາເຫັນວ່າການເຮັດແນວນັ້ນເປັນເລື່ອງງ່າຍໆ . . . ການປະຊຸມໃຫຍ່ນີ້ເປັນຕົວຢ່າງທີ່ເດັ່ນຊັດເຊິ່ງສະແດງວ່າຄົນເຮົາສາມາດເຮັດວຽກຮ່ວມກັນແລະຢູ່ນຳກັນໄດ້."

ຫລາຍຄົນບອກວ່າຫລັກການຄລິດສະຕຽນໃຊ້ການບໍ່ໄດ້ໃນໂລກສະໄໝໃໝ່ນີ້. ແນວໃດກໍຕາມ ມີຫລັກການອື່ນອີກບໍທີ່ໃຊ້ໄດ້ຜົນແລ້ວຫລືຈະໃຊ້ການໄດ້? ຫລັກການຄລິດສະຕຽນຈະມີຄຸນຄ່າຢ່າງແທ້ຈິງຖ້ານຳເອົາໄປໃຊ້ກັບຊຸມຊົນຂອງເຈົ້າຕັ້ງແຕ່ດຽວນີ້ ແລະຫລັກການເຫລົ່ານີ້ຈະເປັນພື້ນຖານສຳລັບຄວາມເປັນເອກະພາບຂອງ 'ທຸກປະເທດ ທຸກກະກູນ ແລະທຸກຊາດ' ທີ່ຢູ່ທົ່ວແຜ່ນດິນໂລກພາຍໃຕ້ລາຊະອານາຈັກຂອງພະເຈົ້າທີ່ປົກຄອງມະນຸດຊາດ.—ຄຳປາກົດ 7:9, 10.

